ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR

ຂ່າວ NEWS

ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283



# ສຳເລັດກອງປະຊຸມລັດຖະມົນຕີການເງິນ ແລະ ຜູ້ວ່າການທະນາຄານກາງອາຊຽນ+3







ກອງປະຊຸມລັດຖະມົນຕີການເງິນ ແລະ ຜູ້ວ່າການທະນາຄານກາງອາຊຽນ+3 (ASEAN Finance Ministers and Central Bank Governors: AFMGM+3) ພາຍໃຕ້ການເປັນປະທານຮ່ວມຂອງປະເທດ ຍີ່ປຸ່ນ ແລະ ສ.ສ. ຫວຽດນາມ ໂດຍຜ່ານລະບົບ Video conference ໄດ້ຈັດຂຶ້ນໃນວັນທີ 18 ກັນຍາ 2020; ສຳລັບກະຊວງການເງິນແຫ່ງ ສປປ ລາວ ແມ່ນນຳໂດຍ ທ່ານ ສົມດີ ດວງດີ ຮອງນາຍົກລັດຖະມົນຕີ, ລັດຖະມົນຕີກະຊວງການເງິນ ແລະ ທະນາຄານແຫ່ງ ສປປ ລາວ (ທຫລ) ໂດຍໄດ້ການມອບໝາຍຈາກທ່ານຜູ້ວ່າການ ທຫລ ໃຫ້ທ່ານ ນາງ ວັດທະນາ ດາລາລອຍ ຮອງຜູ້ວ່າການ ທຫລ ພ້ອມດ້ວຍຄະນະ ເຂົ້າຮ່ວມ ໂດຍປະກອບດ້ວຍບັນດາລັດຖະມົນຕີກະຊວງການເງິນ ແລະ ຜູ້ວ່າການທະນາຄານກາງຂອງບັນດາປະເທດສະມາຊິກອາຊຽນ+3 ທັງໝົດ 13 ປະເທດ ແລະ 1 ເຂດພິເສດປົກຄອງຮົງກົງ, ຕາງໜ້າຈາກອົງການຈັດຕັ້ງສາກົນເຊັ່ນ: ອົງການຕິດຕາມເສດຖະກິດມະຫາພາກອາຊຽນ+3 (AMRO), ອົງການການເງິນສາກົນ (IMF) ແລະ ກອງເລຂາອາຊຽນ (ASEC).

ກອງປະຊຸມ ໄດ້ປຶກສາຫາລື ແລະ ແລກປ່ຽນທັດສະນະກ່ຽວກັບສະພາບການພັດທະນາເສດຖະກິດມະຫາພາກຂອງພາກພື້ນອາຊຽນ+3 ພ້ອມທິດທາງໃນຕໍ່ໜ້າເພື່ອວາງນະໂຍບາຍເສດຖະກິດ-ການເງິນ ຮັບມືກັບຜົນກະທົບການແຜ່ລະບາດເຊື້ອພະຍາດ COVID-19 ແລະ ຍັງໄດ້ມີການຮັບຮອງເອົາເນື້ອໃນການປັບປຸງສັນຍາການຮ່ວມມືຫຼາຍຝ່າຍພາຍໃຕ້ຂໍ້ລິເລີ່ມຊຽງໃໝ່ (CMIM) ຊຶ່ງເປັນກົນໄກການຊ່ວຍເຫຼືອທາງດ້ານການເງິນໃນເວລາຂາດສະພາບຄ່ອງໃນໄລຍະສັ້ນ. ນອກນີ້, ຍັງໄດ້ມີການປຶກສາຫາລືກ່ຽວກັບການສ້າງຄວາມເຂັ້ມແຂງໃນການຕິດຕາມສະພາບເສດຖະກິດມະຫາພາກຂອງພາກພື້ນອາຊຽນ+3 ຂອງອົງການ AMRO ແລະ ວຽກງານຂໍ້ລິເລີ່ມຕະຫຼາດພັນທະບັດອາຊີ (ABMI) ເພື່ອສົ່ງເສີມການອອກພັນທະບັດເປັນສະກຸນເງິນທ້ອງຖິ່ນຂອງອາຊຽນ+3.






ກອງປະຊຸມ AFMGM+3 ໄດ້ຮັບຜົນສຳເລັດຢ່າງຈົບງາມ ທ່າມກາງການປະກອບຄຳເຫັນຂອງບັນດາປະເທດສະມາຊິກ ດ້ວຍບັນຍາກາດທີ່ດີທັງນີ້ກໍ່ເພື່ອເສີມຂະຫຍາຍການຮ່ວມມືໃນພາກພື້ນໃຫ້ມີປະສິດທິພາບ ແລະ ປະສິດທິຜົນສູງຂຶ້ນເລື້ອຍໆ.

**# ຂ່າວ: ຣັດສະໝີ ດວງສັດຈະ**

## ໃຊ້ເງິນກີບທົ່ວທັງຊາດສ້າງບົດບາດຄ່າເງິນກີບລາວ